*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 28-33*
*https://doi.org/10.69692/SUJMRD10special28*

# To Study the Procession of Learner-Centered Approach in Teaching and Learning English Subject at Sayaboury Secondary School

**Phoutthasay MOUNGKHOUNSAVAT*, Thongthiane VATHANAVONG, Sipaseuth PANFONGPHET, Phaivanh VATHANAVONG, and Bounyong PHATTHANA**

*Master candidate, Program in Education and Development; faculty of Education Souphanouvong University Lao PDR*

***Correspondence**: Phoutthasay MOUNGKHOUNSAVAT, Faculty of Education Souphanouvong University Tel: +8652055772722; E-mail: phoutthasaymksv@gmail.com*

***Submitted: December 05, 2024***
***Revised: December 15, 2024***
***Accepted: December 31, 2024***

**Abstract**

This paper focuses on the relevant information on initiatives to conduct student-centered approaches. The study aimed to explore the procession of teaching performance of the Learner-centered teaching and learning English subject at Sayaboury secondary school. The samples group 23 people that included administrators and English teachers. The study's conceptual framework consisted of 5 aspects – 1. The preparation of the educational institution, 2. The development of teachers in the educational institution, 3. The promotion of learning style, 4. Media of teaching materials and 5. the evaluation of teaching and learning management. The research tool was the 5-rating-scale questionnaire for teachers and administrators. The completed program was applied for the interpretation of statistics in terms of Frequency, Percentage, Mean and Standard Deviation.

The result revealed that the state of teaching performance of the learner-centered teaching and learning situation was at a high level. The opinions of administrators and English teachers are unanimous of all 5 aspects without a statistically significant interval at the 0.05 level.

**Keywords**: Learning Management, Learner-Centered

## 1. ພາກສະເໜີ

ລັດຖະບານ ແຫ່ງ ສປປ ລາວ ໄດ້ກໍານົດວິໄສທັດ ໃນການພັດທະນາວັດທະນະທໍາ-ສັງຄົມ ຮອດປີ 2030 ໄວ້ວ່າ "ຊັບພະຍາກອນມະນຸດໄດ້ຮັບການພັດທະນາ ໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກໍາລັງຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂື້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວໃຫ້ຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍ 75 ປີ ". ຄຽງຄູ່ກັບວິໄສທັດ ລັດຖະບານຍັງໄດ້ກໍານົດທິດທາງລວມຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຮອດປີ 2025 ໂດຍສຸມໃສ່ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂື້ນເທື່ອລະກ້າວ, ແກ້ໄຂຄວາມທຸກຍາກ, ພັດທະນາຂະແໜງການສຶກສາ, ວັດທະນະທໍາ, ພັດທະນາສີມືແຮງງານທາງດ້ານປະລິມານ ແລະ ຄຸນນະພາບໃຫ້ໄດ້ດີຂື້ນ. ບົນພື້ນຖານວິໄສທັດ ແລະ ຍຸດທະສາດ ທີ່ລັດຖະບານກໍານົດ; ກະຊວງສຶກສາທິການ ແລະ ກິລາ ຈຶ່ງກໍານົດວິໄສທັດ ດັ່ງນີ້ " ຮອດປີ 2030 ພົນລະເມືອງລາວທຸກຄົນ ໄດ້ຮັບການສຶກສາຢ່າງສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້, ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້" ເພື່ອບັນລຸວິໄສທັດດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ຕ້ອງເອົາໃຈໃສ່ 8 ພາລະກິດ ນອກຈາກນີ້ ຍັງໄດ້ກໍານົດຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025 ໂດຍເລັ່ງໃສ່ 5 ໂຂງເຂດວຽກງານ, ຍຸດທະສາດທີ 1 ປັບປຸງຄຸນນະພາບຂອງສາມັນສຶກສາທັງໃນ ແລະ ນອກໂຮງຮຽນ ເພື່ອໃຫ້ຜູ້ຮຽນທຸກຄົນມີຄຸນສົມບັດ, ມີຄວາມຮູ້ ແລະ ຄວາມສາມາດ ເພື່ອສືບຕໍ່ຮຽນໃນສາຍວິຊາຊີບ ແລະ ສາຍການສຶກສາຊັ້ນສູງ ເຊິ່ງໃນນີ້ປະກອບມີ 7 ບຸລິມາສິດ ໜຶ່ງໃນນັ້ນແມ່ນ ເນັ້ນໃສ່ການສິດສອນວິຊາວິທະຍາສາດ, ເຕັກໂນໂລຊີ, ຄະນິດສາດ, ພາສາອັງກິດ ແລະ ໄອຊີທີ. (ກະຊວງສຶກສາທິການ ແລະ ກິລາ, 2015) ກໍານົດວິໄສທັດ ຮອດປີ 2030 ແລະ ແຜນຍຸດທະສາດ ຮອດປີ 2025. ຕໍ່ມາໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ່ IX (2021-2025) ແມ່ນໄດ້ລະບຸໄວ້ໃນສິ່ງທ້າທາຍຂອງຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ ພາກ 1 ຂອງແຜນ 5 ປີ 2021-2025 (ຂໍ້ທີ 2 ແລະ 3) ສິ່ງທ້າທາຍຫຼັກສໍາລັບຊັ້ນມັດທະຍົມຕອນປາຍ ແມ່ນຄວາມຕ້ອງການງົບປະມານເພີ່ມເຕີມສໍາລັບກໍ່ສ້າງພື້ນຖານໂຄງລ່າງ, ການຂາດເຂີນພະນັກງານທີ່ມີຄຸນນະພາບສູງ ແລະ ຂາດຄູສອນວິຊາຄະນິດສາດ, ວິຊາວິທະຍາສາດ, ໄອທີ ແລະ ພາສາຕ່າງປະເທດ ພ້ອມທັງຂາດ

ຫ້ອງອ່ານ/ຫ້ອງສະໝຸດ ສຳລັບການຄົ້ນຄວ້າຂອງນັກຮຽນ ແລະ ຄູ (ກະຊວງສຶກສາທິການ ແລະ ກິລາ, 2020).

ປັດຈຸບັນສັງຄົມມີການພັດທະນາມີລັກສະນະກ້າວກະໂດດເຮັດໃຫ້ສັງຄົມໂລກກຳລັງກ້າວເຂົ້າສູ່ສັງຄົມແຫ່ງການຮຽນຮູ້ເຊິ່ງຄົນໃນສັງຄົມຈຳເປັນຕ້ອງຮຽນຮູ້ຕະຫຼອດເວລາເພື່ອປັບປ່ຽນ ແລະ ກ້າວໃຫ້ທັນກັບ ຂະບວນການປ່ຽນແປງຢ່າງໄວວາທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳອັນເປັນກົນໄກ ສັງຄົມແຫ່ງການຮຽນຮູ້, ຈັດລະບົບຂະບວນການສຶກສາທີ່ເໝາະສົມ ແລະ ມີຄຸນນະພາບອັນເປັນປັດໄຈ ສຳຄັນໃນການພັດທະນາຄຸນນະພາບຂອງປະຊາກອນ, ຄຸນນະພາບຊີວິດ ແລະ ຄວາມສາມາດໃນການ ແຂ່ງຂັນກັບບັນດາປະເທດທີ່ພວມພັດທະນາ, ສະນັ້ນ ພາສາອັງກິດຈຶ່ງມີຄວາມສຳຄັນຫຼາຍເພາະໄດ້ເຂົ້າມາມີບົດບາດໃນຊີວິດຂອງຄົນລາວ ແລະ ຄົນທົ່ວໂລກໃນການສື່ສານກັນດ້ວຍພາສາອັງກິດ, ໃນທຸກວັນນີ້ແນ່ນອນວ່າປະເທດທີ່ໃຫ້ຄວາມສຳຄັນກັບການຮຽນ-ການສອນພາສາອັງກິດນັ້ນຍ່ອມຮູ້ດີວ່າຄົນທີ່ຮຽນຮູ້ພາສາໄດ້ຢ່າງເລິກເຊິ່ງສາມາດໃຊ້ພາສາເຂົ້າສູ່ສັງຄົມ ແລະ ວັດທະນະທຳ, ສາມາດໃຊ້ພາສາໄດ້ຢ່າງຖືກຕ້ອງເໝາະສົມກັບສັງຄົມ ແລະ ວັດທະນະທຳ. ເນື່ອງຈາກພາສາອັງກິດມີການໃຊ້ກັນທົ່ວໂລກ ຫຼາຍກວ່າພາສາອື່ນໆຈຶ່ງກາຍເປັນພາສາສາກົນທີ່ຕິດຕໍ່ສື່ສານໄດ້ທົ່ວໂລກ; ລັດຖະບານລາວໄດ້ໃຫ້ຄວາມສຳຄັນ ແລະ ຄວາມຈຳເປັນໃນການເລັ່ງພັດທະນາຄຸນນະພາບການຮຽນ-ການສອນວິຊາພາສາອັງກິດ ຫຼາຍຂຶ້ນເຊິ່ງຈະເຫັນໄດ້ຈາກແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດຂອງກະຊວງສຶກສາທິການ ແລະ ກິລາ ໄດ້ຈັດຫຼັກສູດວິຊາພາສາອັງກິດເລີ່ມແຕ່ລະດັບປະຖົມສຶກສາປີທີ 3 ແລະ ທຸກລະດັບເພື່ອໃຫ້ສາມາດສື່ສານກັບນາໆຊາດໄດ້ເພາະພາສາອັງກິດຖືເປັນຂົວຕໍ່ທີ່ຈະເຮັດໃຫ້ເຮົາກ້າວສູ່ຄວາມສຳເລັດ, ເປັນປະຕູເຊື່ອມອອກໄປສູ່ຕ່າງປະ ເທດໄດ້ ແລະ ເປັນກຳລັງສຳຄັນໃນການພັດທະນາ ປະເທດຊາດໃນອະນາຄົດ (ກະຊວງສຶກສາທິການ ແລະ ກິລາ, 2016). ໂດຍຜັນຂະຫຍາຍແຜນພັດທະນາການສຶກສາດັ່ງກ່າວໃຫ້ປາກົດຜົນເປັນຈິງ, ກະຊວງສຶກສາທິການ ແລະ ກິລາ (2019) ໄດ້ອອກຄຳສັ່ງວ່າດ້ວຍການໃຊ້ຮູບແບບການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຈິງໃນໂຮງຮຽນສາມັນທົ່ວປະເທດ ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງຂອງສັງຄົມ ແລະ ເສດຖະກິດທີ່ເກີດຂຶ້ນຢ່າງໄວວາ ລວມທັງຄວາມສັບຊ້ອນຂອງການປະຕິບັດວຽກງານ ແລະ ສະຖານະການບັນຫາໃນການດຳລົງຊີວິດໃນປະຈຸບັນ ເປັນປັດໄຈທີ່ເຮັດໃຫ້ບຸກຄົນຈຳຕ້ອງໃຊ້ຄວາມຮູ້ຄວາມສາມາດ ແລະ ທັກສະການຮຽນຮູ້ ເພື່ອປະຕິບັດວຽກງານ ແລະ ແກ້ໄຂບັນຫາທີ່ສັບຊ້ອນ ການຈັດການຮຽນການສອນຢູ່ໃນໂຮງຮຽນຈຶ່ງຈຳຕ້ອງຕອບສະໜອງຕໍ່ການພັດທະນາຄວາມຮູ້ຄວາມສາມາດຂອງນັກຮຽນໃຫ້ສາມາດດຳລົງຊີວິດໃນສັດຕະວັດທີ 21 ໄດ້ຢ່າງມີປະສິດທິພາບ ຄູສອນວິຊາພາສາອັງກິດຈຳຕ້ອງເຂົ້າໃຈສະພາບການປ່ຽນແປງຂອງສັງຄົມ ແລະ ເສດຖະກິດກັບການຮຽນຮູ້ໃນສັດຕະວັດທີ 21 ແລະ ຈັດການຮຽນການສອນທີ່ເໝາະສົມກັບການປ່ຽນແປງດັ່ງກ່າວ (Ohio Faculty of Education, 2010)

ໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ເປັນໂຮງຮຽນໜຶ່ງທີ່ໄດ້ປະຕິບັດຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍໄດ້ເນັ້ນການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງ ສະນັ້ນມັນຈຶ່ງກາຍເປັນສິ່ງທ້າທາຍໃຫ້ແກ່ຄູ-ອາຈານ ແລະ ນັກຮຽນ ທີ່ຈະໄດ້ສຶກສາຮ່ຳຮຽນຮູບແບບການຈັດການຮຽນການສອນແບບ ໃໝ່. ໃນໄລຍະຜ່ານມາໂຮງຮຽນສາມາດຍາດແຍ່ງສ້າງຜົນງານດ້ານວິຊາການໃນລະດັບດີ ແຕ່ຂະບວນການຈັດການຮຽນ-ການສອນໃນໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ເຫັນວ່າຍັງມີຂໍ້ຄົງຄ້າງຢູ່ໃນດ້ານຂະບວນການຈັດການຈັດການຮຽນການສອນ ເປັນຕົ້ນແມ່ນຄວາມເຂົ້າໃຈລະຫວ່າງວິຊາການຄູ ແລະ ຜູ້ບໍລິຫານ ຕໍ່ກັບການສົ່ງເສີມການຈັດການຮຽນການສອນແບບໃໝ່ທີ່ເນັ້ນເອົານັກຮຽນເປັນໃຈກາງ, ຄວາມເປັນເອກະພາບໃນການແຕ່ງບົດສອນພາຍໃນຈຸວິຊາ, ຂາດໂອກາດໃນການເຝິກອົບຮົມໃນຈຸວິຊາ ທີ່ສົ່ງຜົນເຮັດໃຫ້ຄູສອນບາງລາຍວິຊາແຕ່ງບົດສອນສຳເລັດຕາມຫຼັກສູດທີ່ກຳນົດ ແລະ ນັກຮຽນບໍ່ມີຄວາມກະຕືລືລົ້ນໃນການຮ່ຳຮຽນ, ຜົນການຮຽນແມ່ນບໍ່ໄດ້ດີເທົ່າທີ່ຄວນ, ສະແດງອອກອັດຕາປະລະການຮຽນຂອງນ້ອງນັກຮຽນເພີ່ມຂຶ້ນ - ຈຳນວນນັກຮຽນປະລະການຮຽນສົກຮຽນ 2022-2023 ມີທັງໝົດ 18 ນ້ອງ, ຍິງ 13 ນ້ອງ ກວມເອົາ 2.6%. ສົກຮຽນ 2023-2024 ມີທັງໝົດ 44 ນ້ອງ, ຍິງ 19 ນ້ອງ ກວມເອົາ 4% ທຽບໃສ່ສົກຮຽນ 2022-2023 ເຫັນວ່າອັດຕາການປະລະເພີ່ມຂຶ້ນ 2.4 %. ຜົນການຮຽນໃນສົກຮຽນ 2022-2023 ເສັງຕົກທັງໝົດ 9 ນ້ອງ, ຍິງ 4 ນ້ອງ ກວມເອົາ 1.1% ແລະ ສົກຮຽນ 2023-2024 ເສັງຕົກທັງໝົດ 21 ນ້ອງ, ຍິງ 12 ນ້ອງ ກວມເອົາ 2.6% ທຽບໃສ່ສົກຮຽນ 2022-2023 ເຫັນວ່າອັດຕານັກຮຽນເສັງຕົກເພີ່ມຂຶ້ນ 1.5 %. ໃນນີ້ແມ່ນບໍ່ຕົກວິຊາພາສາອັງກິດ ຜົນການຮຽນວິຊາພາສາອັງກິດແມ່ນຜ່ານຕາມເກນ ແຕ່ລັກສະນະການປະເມີນກວດກາປະຈຳເດືອນຂອງຄູສອນສ່ວນໃຫ່ຍເປັນການກວດກາພາກຂຽນ ເຮັດໃຫ້ບໍ່ສາມາດຮັບຮູ້ເຖິງຄວາມສາມາດໃນການເວົ້າພາສາອັງກິດຂອງຜູ້ຮຽນ ໂດຍອີງໃສ່ບົດບັນທຶກຜົນການປະເມີນລັດຖະກອນຄູ ສົກຮຽນ 2022-2023 ແລະ ສົກຮຽນ 2023-2024 ໃນແຟ້ມສະສົມຜົນງານທີ່ມີການສະສົມບົດກວດກາປະຈຳເດືອນມາອ້າງອີງ ເຫັນວ່າ ບົດກວດກາແມ່ນເປັນພາກຂຽນທັງໝົດທຸກເດືອນ (ໂຮງຮຽນ ມສ ໄຊຍະບູລີ, 2024). ຄຽງຄູ່ກັບບັນຫາທີ່ກ່າວມາໄດ້ຍົກໃຫ້ເຫັນເຖິງ

ສະພາບປະຈຸບັນປະເທດລາວກຳລັງປະເຊີນໜ້າກັບວິກິດການທາງດ້ານຄຸນນະພາບການສຶກສາ ການຮຽນການສອນສ່ວນໃຫ່ຍຜູ້ສອນຍັງສອນໄປຕາມຕຳລາ ສະນັ້ນ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ເນັ້ນໜັກໃສ່ວິທີການຮຽນ-ການສອນແບບຖືເອົານັກຮຽນເປັນໃຈກາງ ເຊິ່ງກົງກັນຂ້າມກັບວິທີການຮຽນ- ການສອນແບບເກົ່າທີ່ຄູເປັນຜູ້ຖ່າຍທອດຄວາມຮູ້ໃຫ້ໂດຍກົງ. ພວກເຮົາບໍ່ຕ້ອງການໃຫ້ພວກເຂົາຈື່ເອົາແຕ່ບົດຮຽນ ແຕ່ພວກເຮົາຕ້ອງການ ໃຫ້ພວກເຂົາເຂົ້າໃຈ ແລະ ສາມາດນຳຄວາມຮູ້ທີ່ໄດ້ຮຽນມານຳໄປໃຊ້ເຂົ້າໃນຊີວິດປະຈຳວັນ ແລະ ຮູ້ຮັບຜິດຊອບຕໍ່ການຮຽນຂອງຕົນ ດ້ວຍການປະດິດຄິດຄົ້ນວິທີການຮຽນ ຫຼື ສ້າງແຜນວາດເພື່ອຄວາມຈື່ຈຳ ແລະ ຊ່ວຍໃນການຮຽນ ເພື່ອໃຫ້ນັກຮຽນ ສາມາດຮຽນຮູ້ໄດ້ຢ່າງມີປະສິດຕິຜົນ ໂດຍການປັບຂະບວນການຮຽນ-ການສອນ ໃຫ້ແທດເຫມາະກັບສະພາບຄວາມເປັນຈິງ, ຮູ້ຈັກກົນໄກການເຮັດວຽກຂອງສະຫມອງ ແລະ ຮູ້ວ່າການສອນແບບໃດຈຶ່ງຈະແທດເຫມາະກັບວິທີການຮຽນຮູ້ຂອງນັກຮຽນແຕ່ລະຄົນ ແລະ ວິທີການຮຽນດັ່ງກ່າວນັ້ນສາມາດປະເມີນຜົນໄດ້ຄືແນວໃດ. ເຄື່ອງມືສຳລັບການຮຽນການສອນ ແລະ ການຝຶກອົບຮົມຈະແມ່ນສ່ວນຫນຶ່ງຂອງການຝຶກອົບຮົມໃນຄັ້ງນີ້. ເຄື່ອງມືຕ່າງໆ ເຊັ່ນ: 5E, ການສ້າງແຜນວາດຊ່ວຍຈື່, ແຜນວາດແນວຄວາມຄິດ, ກໍລະນີສຶກສາ, ແລະ ການສົນທະນາແບບສ່ອງແສງ ຈະໄດ້ຖືກນຳມາໃຊ້ເຂົ້າໃນການຮຽນຮູ້. ຍຸດທະສາດດັ່ງກ່າວນີ້ຈະຕອບສະໜອງລາຍການເຄື່ອງມືທີ່ສາມາດເລືອກເອົາມານຳໃຊ້ຕາມຄວາມເຫມາະສົມກັບບົດຮຽນທີ່ຈະສອນ ແນໃສ່ພັດທະນາຜູ້ຮຽນໃຫ້ມີທັກສະການຄົ້ນຄິດໃນລະດັບສູງ ໂດຍຜ່ານການຮຽນຮູ້ຢ່າງຫ້າວຫັນ (ຄູ່ມືແນະນຳວິທີການສິດສອນ, 2014) ເຊິ່ງມີນັກຄົ້ນຄວ້າຫຼາຍທ່ານໄດ້ສຶກສາເຖິງປະສິດທິພາບຂອງການຈັດການຮຽນການສອນທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ ໂດຍໄດ້ຂໍ້ສະຫຼຸບວ່າເປັນວິທີການທີ່ຈະສາມາດຊ່ວຍສົ່ງເສີມໃຫ້ຜູ້ຮຽນໄດ້ຮຽນຮູ້ເຕັມສັກກະຍະພາບຂອງຕົນເອງ, ຕົວຊີ້ບອກທີ່ສຳຄັນຄືຄູ ແລະ ນັກຮຽນມີບົດບາດສຳຄັນຢູ່ໃນລະດັບຫຼາຍ ສາມາດຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ຮຽນເກີດອົງຄວາມຮູ້ ແລະ ຄວາມເຂົ້າໃຈຫຼັງການຮຽນສູງຂຶ້ນ, ມີຄວາມກ້າວໜ້າ ແລະ ໂດດເດັ່ນໃນການຮຽນ (Boriboon & Wuttisela, 2015; Jaiarree & Wuttaphan, 2016; To-im & Waichalad, 2020)

ຈາກບັນຫາ ແລະ ຄວາມສຳຄັນທີ່ໄດ້ນຳສະເໜີຢູ່ໃນຂ້າງເທິງນີ້ ຜູ້ຄົ້ນຄວ້າຈຶ່ງມີຈຸດປະສົງ ເພື່ອສຶກສາຂະບວນການຈັດການຮຽນ-ການສອນແບບເອົານັກຮຽນເປັນໃຈກາງໃນວິຊາພາສາອັງກິດ ທີ່ໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ເມືອງ ໄຊຍະບູລີ ແຂວງ ໄຊຍະບູລີ ເພື່ອຍົກໃຫ້ເຫັນເຖິງຂະບວນການຈັດການຮຽນ-ການສອນໃນປະຈຸບັນ ແລະ ນຳໄປສູ່ແນວທາງໃນການພັດທະນາຂະບວນການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງໃນອະນາຄົດ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າວິໄຈນີ້ເປັນຂະບວນການວິໄຈແບບສຳຫຼວດ ໂດຍໃຊ້ຂໍ້ມູນທາງດ້ານປະລິມານ (ນຳໃຊ້ແບບສອບຖາມ) ເພື່ອໃຊ້ໃນການສຳຫຼວດຂໍ້ມູນຂະບວນການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງໃນວິຊາພາສາອັງກິດຂອງໂຮງຮຽນມັດທະຍົມສົມບຸນ ໄຊຍະບູລີ. ຂໍ້ມູນທີ່ໄດ້ຈາກແບບສອບຖາມຈະຖືກນຳມາສະຫຼຸບລວມພ້ອມທັງປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງຂອງຄຳຕອບໂດຍຈຳແນກຕາມກຸ່ມຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ເພື່ອຢັ້ງຢືນຕື່ມວ່າຄວາມຄິດເຫັນຂອງທັງສາມກຸ່ມນີ້ມີຄວາມສອດຄ່ອງກັນ ຫຼື ບໍ່ ແລະ ເບິ່ງຕື່ມວ່າມີດ້ານໃດແດ່ທີ່ສອດຄ່ອງ ແລະ ບໍ່ສອດຄ່ອງກັນພ້ອມກັບສະເໜີແນວທາງໃນການປັບປຸງຂະບວນການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງໃນອະນາຄົດ.

### 2.1. ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າ ປະກອບມີ ຜູ້ບໍລິຫານການສຶກສາ ໂດຍແມ່ນຜູ້ທີ່ມີຕຳແໜ່ງບໍລິຫານຈຳນວນ 12 ຄົນ ແລະ ຄູສອນ ເຊິ່ງແມ່ນຄູສອນວິຊາພາສາອັງກິດ ຈຳນວນ 11 ຄົນ ທີ່ກຳລັງປະຕິບັດວຽກງານໃນພາກຮຽນທີ 1 ສົກຮຽນ 2024-2025.

### 2.2. ເຄື່ອງມືທີ່ໃຊ້ການຮວບຮວມຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສອບຖາມຊະນິດແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ (ບຸນຊົມ ສີສະອາດ, 2010; Best & Kahn, 1993; Wongwanit, 2012; Phanakij & Nillapun, 2016; Tanthawanich & Jindasri, 2018 ແລະ Vathanavong, Tungkasamith and Thinwiangthong, 2024) ຄື:

5 ໝາຍເຖິງການປະຕິບັດໃນລະດັບ ຫຼາຍທີ່ສຸດ

4 ໝາຍເຖິງການປະຕິບັດໃນລະດັບ ຫຼາຍ

3 ໝາຍເຖິງການປະຕິບັດໃນລະດັບ ປານກາງ

2 ໝາຍເຖິງການປະຕິບັດໃນລະດັບ ໜ້ອຍ

1 ໝາຍເຖິງການປະຕິບັດໃນລະດັບ ໜ້ອຍທີ່ສຸດ

ໂດຍແບ່ງອອກເປັນ 3 ພາກສ່ວນຄື: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ພາກທີ 2 ແມ່ນຂໍ້ມູນກ່ຽວກັບແບບສອບຖາມກ່ຽວກັບສະພາບການຈັດການຮຽນ - ການສອນແບບເອົານັກຮຽນເປັນໃຈກາງ. ພາກທີ່ 3 ຂໍ້ສະເໜີແນະ ແລະ ແນວທາງໃນການປັບປຸງເພີ່ມເຕີມ.

### 2.3. ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

ການສ້າງ ແລະ ການຫາເຄື່ອງມືຄຸນນະພາບໃນການເກັບຂໍ້ມູນຄັ້ງນີ້ ທີມຄົ້ນຄວ້າໄດ້ດຳເນີນຕາມຂັ້ນຕອນດັ່ງຕໍ່ໄປນີ້:

1) ສຶກສາຄົ້ນຄວ້າທິດສະດີ, ຫຼັກການ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບສິ່ງທ້າທາຍຕໍ່ກັບປະສິດທິພາບຄູໃນສະຖານການສຶກສາຄູໃນ ສປປ ລາວ ເພື່ອເປັນພື້ນຖານໃນການສ້າງເຄື່ອງມືໃນການເກັບກຳຂໍ້ມູນ.

2) ສ້າງແບບສອບຖາມໃຫ້ຄອບຄຸມຕາມຈຸດປະສົງທີ່ຕັ້ງໄວ້ເພື່ອເປັນເຄື່ອງມືໃນການເກັບຂໍ້ມູນ.

3) ນຳແບບສອບຖາມໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອພິຈາລະນາຄວາມຊັດເຈນຂອງຄຳຖາມ, ສິ່ງທີ່ຄວນປັບປຸງ ແລະ ກວດສອບຄວາມທ່ຽງຕົງທາງດ້ານເນື້ອໃນ ໂດຍມີດັດສະນີຄວາມສອດຄ່ອງ (IOC : Index of item objective congruence) ຢູ່ໃນລະຫວ່າງ 0.66 – 1.00 ແລະ ມີຄ່າສະເລ່ຍຄວາມເໝາະສົມ 4.55 ຢູ່ໃນລະດັບເໝາະສົມຫຼາຍທີ່ສຸດ ( = 4.55, S.D = 0.45).

4) ນຳແບບສອບຖາມທີ່ປັບປຸງແລ້ວໄປທົດລອງໃຊ້ (Try out) ຄູສອນຈຳນວນ 30 ຄົນ ທີ່ບໍ່ແມ່ນກຸ່ມຕົວຢ່າງໃນໂຮງຮຽນມັດທະຍົມສົມບູນເອກະພາບ ເມືອງໄຊຍະບູລີ ແຂວງໄຊຍະບູລີ; ໂດຍວິເຄາະຫາຄ່າຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມໂດຍໃຊ້ຄ່າສຳປະສິດອານຟາ (Alpha – Coefficient) ຕາມວິທີການຂອງ Cronbach ໄດ້ຄ່າ 0.872.

5) ປັບປຸງແກ້ໄຂແບບສອບຖາມໃຫ້ຖືກຕ້ອງເໝາະສົມ ແລະ ຈັດພິມສະບັບສົມບູນແລ້ວນຳໄປເກັບຂໍ້ມູນນຳກຸ່ມຕົວຢ່າງໃນໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ເຊິ່ງລວມທັງໝົດແມ່ນ 23 ຄົນ.

### 2.4. ວິທີການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນຄັ້ງນີ້ແມ່ນນຳໃຊ້ໂປຣແກມຄອມພິວເຕີສຳເລັດຮູບ SPSS version 20 ເຂົ້າຊ່ວຍໃນການວິເຄາະກ່ຽວກັບຂໍ້ມູນແຕ່ລະພາກ ໂດຍໃຊ້ຄ່າສະຖິຕິພື້ນຖານ, ໄດ້ແກ່: ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation) ແລະ ນຳໃຊ້ສະຖິຕິປຽບທຽບສົມມຸດຖານແບບ Independnet sample T-Test. ສຳລັບພາກສ່ວນທີ 3 ທີ່ເປັນຄຳຖາມປາຍເປີດແມ່ນຈະເປັນການສັງເຄາະຕາມຄຳແນະນຳຂອງກຸ່ມຕົວຢ່າງເພື່ອນຳໄປຈັດກຸ່ມຄຳ (Category), ຕີຄວາມໝາຍ (Interpretation) ແລ້ວນຳໄປສູ່ການສະຫຼຸບ (Suwannoi, 2012; Wongyai, 2020).

### 3. ຜົນໄດ້ຮັບ

ຈາກຜົນການຄົ້ນຄວ້າ ເຫັນວ່າຂະບວນການການຈັດການຮຽນການສອນໂດຍເອົານັກຮຽນເປັນໃຈກາງ ແມ່ນໄດ້ຈັດຕັ້ງປະຕິບັດຢູ່ໃນລະດັບຫຼາຍໃນທຸກດ້ານ ເຊັ່ນ ດ້ານການກຽມຄວາມພ້ອມຂອງສະຖານການສຶກສາ ຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ມີຄ່າສະເລ່ຍ $\bar{X}$ = 4.32 ແລະ ຄ່າຜັນປ່ຽນມາດຕະຖານ S.D = 0.45. ດ້ານການພັດທະນາຄູໃນສະຖານການສຶກສາ ຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ມີຄ່າສະເລ່ຍ $\bar{x}$ = 4.44 ແລະ ຄ່າຜັນປ່ຽນມາດຕະຖານ S.D 0.51. ການສົ່ງເສີມການຮຽນຮູ້ແບບເອົານັກຮຽນເປັນໃຈກາງ ຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ມີຄ່າສະເລ່ຍ $\bar{X}$ = 4.15 ແລະ ຄ່າຜັນປ່ຽນມາດຕະຖານ S.D = 0.50. ການນຳໃຊ້ສື່ການສອນ ຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ມີຄ່າສະເລ່ຍ $\bar{X}$ = 4.17 ແລະ ຄ່າຜັນປ່ຽນມາດຕະຖານ S.D = 0.32. ການພັດທະນາຄູໃນສະຖານການສຶກສາ ຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ມີຄ່າສະເລ່ຍ $\bar{X}$ = 4.44 ແລະ ຄ່າຜັນປ່ຽນມາດຕະຖານ S.D = 0.51. ຜົນການປຽບທຽບຄວາມຄິດເຫັນ ລະຫວ່າງ ຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ໂດຍພາບລວມເຫັນວ່າບໍ່ມີຄວາມແຕກຕ່າງກັນ ແລະ ເມື່ອພິຈາລະນາເປັນລາຍດ້ານກໍ່ເຫັນວ່າທຸກດ້ານບໍ່ແຕກຕ່າງກັນເຊັ່ນກັນ.

### 3. ວິພາກຜົນ

ຂະບວນການຈັດການຮຽນ - ການສອນແບບເອົານັກຮຽນເປັນໃຈກາງທີ່ໂຮງຮຽນມັດທະຍົມສົມບູນໄຊຍະບູລີ ຢູ່ໃນລະດັບຫຼາຍທຸກດ້ານ ສະແດງໃຫ້ເຫັນວ່າຄູສອນໄດ້ປະຕິບັດການສອນທີ່ມຸ່ງເນັ້ນສູ່ຂະບວນການຈັດການຮຽນການສອນແບບເອົານັກຮຽນເປັນໃຈກາງຢ່າງແທ້ຈິງ ເຊິ່ງຂະບວນດັ່ງກ່າວຍັງໄດ້ຮັບການສະໜັບສະໜູນ ໃນລວງດຽວກັນຈາກຜູ້ບໍລິຫານ ທັງ 5 ດ້ານແມ່ນມີການຈັດຕັ້ງຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ບຸນເລີດ (2015) ໄດ້ສຶກສາກ່ຽວກັບສະພາບ ແລະ ບັນຫາການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນສຳຄັນໃນໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາສະມຸດປາການ ປະເທດໄທ ພົບວ່າ ສະພາບ ແລະ ບັນຫາການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ໂດຍພາບລວມຢູ່ໃນລະດັບຫຼາຍ ແລະ ຍັງສອດຄ່ອງກັບບົດຄົ້ນຄວ້າຂອງ ໃຈກະຈ່າງ (2010) ເຊິ່ງສຶກສາເລື່ອງສະພາບການຈັດການຮຽນ-ການສອນທີ່ເນັ້ນນັກຮຽນເປັນໃຈກາງ ໂຮງຮຽນສາທິດມະຫາວິທະຍາໄລລາມຄຳແຫງ ຜົນການຄົ້ນຄວ້າພົບວ່າ ດ້ານການກຽມຄວາມພ້ອມຂອງສະຖານການສຶກສາ, ດ້ານການພັດທະນາຄູໃນສະຖານການສຶກສາ, ດ້ານການສົ່ງເສີມການຮຽນຮູ້ທີ່ເນັ້ນນັກຮຽນເປັນໃຈກາງ, ດ້ານການວິໄຈເພື່ອການຮຽນຮູ້ ແລະ ດ້ານການປະເມີນຜົນໃນການຈັດການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຢູ່ໃນລະດັບຫຼາຍ. ນອກຈາກນີ້, ຜົນການຄົ້ນຄວ້ານີ້ຍັງເປັນການປະຕິບັດການສອນທີ່ສອດຄ້ອງກັບຄຳສັ່ງຂອງກະຊວງສຶກສາທິການ ແລະ ກິລາ (2019) ດ້ວຍການໃຊ້ຮູບແບບການຈັດການຮຽນການສອນແບບເອົານັກຮຽນ

ເປັນໃຈກາງ ແລະ ເນັ້ນການປະຕິບັດຈິງໃນໂຮງຮຽນສາມັນທົ່ວປະເທດ ໂດຍເນັ້ນເຖິງຂະບວນການຈັດການຮຽນການສອນທີ່ເນັ້ນເອົານັກຮຽນເປັນໃຈກາງ ນັ້ນຄູຄວນສະແດງບົດບາດເປັນຜູ້ລິເລີ່ມໃນການວາງແຜນກິດຈະກຳ, ກະກຽມວັດຖຸອຸປະກອນສື່ການສອນ, ຄວບຄຸມດູແລຂະບວນການຈັດການຮຽນການສອນ, ສັງເກດຂະບວນການຮຽນຮູ້ ແລະ ກະຕຸ້ນການຮຽນຮູ້ໃຫ້ແກ່ຜູ້ຮຽນ, ອະພິປາຍຊ່ວຍຜູ້ຮຽນສະຫຼຸບອົງຄວາມຮູ້, ສົ່ງເສີມຄວາມຮູ້ ແລະ ນຳເອົາຄວາມຮູ້ໄປໃຊ້ ລວມຮັບປະກັນການປະເມີນຜົນທີ່ຫຼາກຫຼາຍ. ສຳນັກສົ່ງເສີມວິຊາການ ແລະ ງານທະບຽນ (2010) ແລະ ກິຕິ ຄຸວະສານົນ (2017) ແລະ Vathanavong et al (2021) ທີ່ໄດ້ກ່າວວ່າອົງປະກອບທີ່ສຳຄັນຂອງການຈັດການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ຄວນມີອົງປະກອບທີ່ສຳຄັນ 4 ດ້ານ ໄດ້ແກ່: ດ້ານຕົວຄູ ເປັນໝາກຫົວໃຈສຳຄັນຂອງການຂັບເຄື່ອນອົງປະກອບອື່ນ ໆ ໃຫ້ສາມາດດຳເນີນການໄດ້ຢ່າງມີປະສິດທິພາບ ບໍ່ວ່າຈະເປັນການຈັດປະສົບການໃນຫ້ອງຮຽນ, ການສະໜັບສະໜູນໃຫ້ນັກຮຽນແຕ່ລະຄົນຢ່າງເຂົ້າໃຈເຖິງທຳມະຊາດຂອງຄວາມແຕກຕ່າງຂອງບຸກຄົນ ຫລື ຈະເປັນຜູ້ທີ່ຈັດສະພາບແວດລ້ອມໃຫ້ເໝາະສົມກັບການຮຽນການສອນ. ດ້ານສະພາບແວດລ້ອມຂອງໂຮງຮຽນ ແລະ ຫ້ອງຮຽນກໍເປັນຫົວໃຈສຳຄັນຢ່າງໜຶ່ງໃນການຮຽນ ແຕ່ການຈັດສະພາບແວດລ້ອມໃຫ້ເອື້ອຕໍ່ການຮຽນການສອນຈຳເປັນຈະຕ້ອງມີຄວາມສົມດຸນ ບໍ່ວ່າຈະເປັນການຈັດພື້ນທີ່ຂອງຫ້ອງຮຽນ, ການຈັດຕົກແຕ່ງຄວາມສະອາດ ຫລື ຄວາມສະຫວ່າງຂອງຫ້ອງຮຽນ, ສະພາບແວດລ້ອມທີ່ເໝາະສົມຈະຊ່ວຍສົ່ງເສີມໃຫ້ຂະບວນການສອນຂອງຄູດຳເນີນໄປຢ່າງມີປະສິດທິພາບ ຊ່ວຍກະຕຸ້ນໃຫ້ນັກຮຽນເກີດການຮຽນຮູ້ທັງຈາກບົດຮຽນໃນຫ້ອງຮຽນ ແລະ ຈາກການສຶກສາດ້ວຍຕົນເອງ. ດ້ານຕົວນັກຮຽນ, ນັກຮຽນໃນຫ້ອງຮຽນນັ້ນຈະມີລັກສະນະທີ່ມີຄວາມສຸກໃນການຮຽນໃນຂະນະທີ່ສາມາດຢູ່ໃນລະບຽບ, ກະຕິກາຂອງຫ້ອງຮຽນ ນອກຈາກນີ້ ນັກຮຽນຈະມີລັກສະນະຂອງຄວາມກ້າຫານໃນການສະແດງອອກ, ກ້າຄິດ, ກ້າເຮັດ ແລະສາມາດເຮັດວຽກຮ່ວມກັບຜູ້ອື່ນໄດ້ເປັນຢ່າງດີ.

## 4. ສະຫຼຸບ

ຂະບວນການຈັດການຮຽນການສອນພາສາອັງກິດໂດຍການເນັ້ນເອົານັກຮຽນເປັນໃຈກາງຂອງໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ໂດຍມີການປະຕິບັດຂະບວນການຈັດການຮຽນການສອນທັງ 5 ດ້ານແມ່ນຢູ່ໃນລະດັບຫຼາຍ ເຊິ່ງເປັນການສະທ້ອນໃຫ້ເຫັນເຖິງນະໂຍບາຍຂອງໂຮງຮຽນໄດ້ມີການສະໜັບສະໜູນໃຫ້ຄູໄດ້ດຳເນີນການຮຽນການສອນຕາມແຜນພັດທະນາຄູໃຫ້ມີການປັບປຸງ ແລະ ປ່ຽນແປງສະພາບການຈັດການຮຽນການສອນໃຫ້ທັນກັບການປ່ຽນແປງຂອງສັງຄົມຍຸກປັດຈຸບັນຢ່າງທັນການ. ນອກຈາກນີ້ ຈາກສົມມຸດຖານທີ່ຕັ້ງໄວ້ ພົບວ່າ ຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ ແມ່ນມີຄວາມຄິດເຫັນທີ່ເປັນເອກະພາບກັນທັງດ້ານການກຽມຄວາມພ້ອມຂອງສະຖານການສຶກສາ, ດ້ານການພັດທະນາຄູໃນສະຖານການສຶກສາ, ດ້ານການສົ່ງເສີມການຮຽນຮູ້ແບບເອົານັກຮຽນເປັນໃຈກາງ, ດ້ານການນຳໃຊ້ສື່ການສອນ ແລະ ດ້ານການປະເມີນຜົນການຈັດການຮຽນການສອນຢ່າງບໍ່ມີໄລຍະສຳຄັນທາງສະຖິຕິທີ່ລະດັບ 0.05.

## 5. ຂໍ້ຂັດແຍ້ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 6. ຂໍ້ສະເໜີແນະ

ກິດຈະກຳການຮຽນການສອນຄູຕ້ອງຄຳນຶງເຖິງຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນເປັນສຳຄັນກິດຈະກຳຕ້ອງເປີດໂອກາດໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນຂະບວນການຮຽນຮູ້ ແລະ ເນັ້ນໃຫ້ນັກຮຽນສາມາດສ້າງອົງຄວາມຮູ້ໄດ້ດ້ວຍຕົນເອງຜ່ານກິດຈະກຳການຮຽນຮູ້ຄູຈັດໃຫ້ ໝາຍຄວາມວ່າ ໃຫ້ຜູ້ຮຽນສາມາດຮຽນຮູ້ຜ່ານປະສົບການໃນສະພາບຄວາມເປັນຈິງ ເປັນການພຶ່ງພາຕົນເອງເພື່ອໃຫ້ນັກຮຽນສາມາດນຳຄວາມຮູ້ ແລະ ທັກສະໄປໝູນໃຊ້ຕົວຈິງໄດ້ຢ່າງເໝາະສົມກັບສະຖານນະການໃນຊີວິດປະຈຳວັນ ແລະ ການປະເມີນຕົນເອງຢ່າງສະໝ່ຳສະເໝີຂອງນັກຮຽນ ໂດຍວິທີນີ້ຊ່ວຍໃຫ້ເຂົາເຈົ້າເຂົ້າໃຈຕົນເອງ ແລະ ຮຽນຮູ້ເຖິງຈຸດເດັ່ນ ແລະ ຈຸດອ່ອນຂອງຕົນເອງເພື່ອນຳມາພັດທະນາຕົນເອງ.

ຄູຄວນເນັ້ນຄວາມຮ່ວມມືຂອງຜູ້ຮຽນໃນຫ້ອງຮຽນ ແລະ ຮູບແບບການຮຽນຮູ້ຊຶ່ງອາດຈັດໄດ້ທັງແບບລາຍບຸກຄົນ ແລະ ແບບກຸ່ມ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025)*. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2019). *ຄຳສັ່ງວ່າດ້ວຍການໃຊ້ຮູບແບບການຈັດການຮຽນການສອນທີ່ເນັ້ນນັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບດຈິງໃນໂຮງຮຽນສາມັນທົ່ວປະເທດ*. ສະບັບເລກທີ 389/ສສກ. ນະຄນຫຼວງວຽງຈັນ, ວັນທີ 29 MAR 2019.

ກະຊວງສຶກສາທິການ ແລະ ກິລາ. (2016). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020)*. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2015). *ດຳລັດວ່າດ້ວຍການສຶກສາ (ສະບັບປັບປຸງ)*. ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ.

ກະຊວງສຶກສາທິການ ແລະ ກິລາ. (2010). *ຄູ່ມືການຄຸ້ມຄອງວິຊາການ ໂຮງຮຽນມັດທະຍົມສຶກສາ.* ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ.

ກົມຈັດຕັ້ງ ແລະ ພະນັກງານ. (2020). *ວິໄສທັດ ຮອດປີ 2030, ແຜນຍຸດທະສາດການພັດທະນາ ຄູ ແລະ ບຸກຄະລາກອນ.* ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ.

ຄຸວະສານິນ, ກ. (2017). *Child-Centered Education ໃນໂຄງການໂຮງຮຽນກຸງເທບມະຫານະຄອນສູ່ຄວາມເປັນເລີດ.* ຄະນະຄຸສາດ ມະຫາວິທະຍາໄລຈຸລາລົງກອນ. ກຸງເທບ: ບໍລິສັດນັດຊະວັດ ຈຳກັດ.

ຄູ່ມືແນະນຳວິທີການສິດສອນ. (2014). ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ໃຈກະຈ່າງ, ສ. (2010). *ສະພາບການຈັດການຮຽນ-ການສອນທີ່ເນັ້ນນັກຮຽນເປັນໃຈກາງ ໂຮງຮຽນສາທິດມະຫາວິທະຍາໄລລາມຄຳແຫງ.* ລາຍງານການຄົ້ນຄວ້າສະບັບສົມບູນສະເໜີຕໍ່ມະຫາວິທະຍາໄລ ລາມຄຳແຫງ. ສືບຄົ້ນຈາກ: http://www.researcher.ru.ac.th/Research_Action/0000000063_1.pdf

ສຳນັກສົ່ງເສີມວິຊາການ ແລະ ງານທະບຽນ. (2010). *ຄູ່ມືການຈັດການຮຽນການສອນທີ່ຍຶດຜູ້ຮຽນເປັນສູນກາງ ການຮຽນຮູ້.* ມະຫາວິທະຍາໄລຣາຊາພັດວະໄລຍໍລົງກອນໃນພະບໍຣົມຣາຊາຊູປະຖຳ. ກຸງເທບ: ໂຮງພິມທຽນວັດທະນາ ຈຳກັດ.

ສີສະອາດ, ບ. (2010). *ການວິໄຈຂັ້ນພື້ນຖານ (ພິມຄັ້ງທີ່ 8).* ກຸງເທບມະຫານະຄອນ: ສຸວີຣິຍາສາສົນ.

ບຸນເລີດ, ທ. (2015). *ສະພາບ ແລະ ບັນຫາການຈັດການຮຽນການສອນທີ່ເນັ້ນຜູ້ຮຽນເປັນສຳຄັນໃນໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາສະມຸດປາການ ປະເທດໄທ.* ວິທະຍານິພົນປະລິນຍາຄຸສາດມະຫາບັນດິດ ສາຂາບໍລິຫານການສຶກສາ, ມະຫາວິທະຍາໄລຣາຊາພັດຈັນທະກະເສມ.

ໂຮງຮຽນ ມສ ໄຊຍະບູລີ. (2024). *ບົດສະຫຼຸບ ປະຈຳສົກຮຽນ 2023-2024 ຂອງໂຮງຮຽນ ມສ ໄຊຍະບູລີ.* ໄຊຍະບູລີ: ໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ.

Best, J.W., & Kahn J.V. (1993). *Research in Education (7th ed.).* Boston: Allyn and Bacon.

Boriboon, K., & Wuttisela, K. (2015). Learning Management by Demonstration Technique on Rate of Reaction to Develop Learning Achievement for Grade 11 Students. *In The 34th National Graduate Research Conference,* pp. 1996-2005. Khon Kaen: Khon Kaen University.

Jaiarree, J & Wuttaphan, N. (2016). The Achievement Study of Human Resource Management Subject by Learner Center Through Problem Based Learning: A Case of Pibulsongkram Rajabhat University. *In The Proceeding of the 16th Graduate Studies of Northern Rajaphat University Network Conference,* pp. 15-29. Phetchabun: Phetchabun Rajabhat University.

Ohio Department of Education. (2010). *21st Century skills.* Ohio, United States of America.

Phanakij, P. & Nillapun, M. (2016). Development of an Instructional Model to Enhance Creative Problem Solving Ability and Scientific Innovation for Primary School Students. *Silpakorn Education Journal, 8*(2), 192-204. From:https://so05.tcithaijo.org/index.php/sueduresearchjournal/article/download/48755/62150/185815

Tanthawanich, P. and Chindasri, P. (2018). The Real Meaning of IOC. *Journal of EducationalMeasurement Mahasarakham University, 24*(2), 3-12. From:https://so02.tci-thaijo.org/index.php/jemmsu/article/view/174521/124950

To-Im, J & Waichalad. (2020). The study of learning achievement of student-centered learning approach: Principle of Environmental. *Silpakorn University e-Journal (Social Sciences, Humanities, and Arts), 8*(2): 115-131. From: https://so05.tci-thaijo.org/index.php/sujthai/article/view/131210/164332

Vathanavong P, Vathanavong T, Sanrattana U & Yuankrathok P. (2021). The Curriculum Development of Enhancing Research in Classroom Competence through Eclassnet for Teacher Training Student at Faculty of Education, Souphanouvong University. *Souphanouvong Journal of Multidisciplinary Research and Development, 7*(1): 79 - 92. From: http://www.su-journal.com/browse_article/view_journal.php?art_id=172

Vathanavong T, Tungkasamith A and Thinwiangthong S. (2024). Enhancing professional development with Lesson study training for Lecturers at Higher education institution in Lao PDR. *FWU Journal of Social Science, 18*(1): 104-119. From: DOI: http://doi.org/10.51709/19951272/Spring2024/8

ຕາຕະລາງທີ 1. ຜົນການສຶກສາກ່ຽວກັບຂະບວນການຈັດການຮຽນ - ການສອນແບບເອົານັກຮຽນເປັນໃຈກາງ ທີ່ໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ

| **ດ້ານທີ** | **ຜູ້ບໍລິຫານ (n=12)** | | **ຄູສອນ (n=11)** | | **ລະດັບ ການປະຕິບັດງານ** | | **ແປຜົນ** |
|---|---|---|---|---|---|---|---|
| | $\bar{x}$ | S.D | $\bar{x}$ | S.D | $\bar{x}$ | S.D | |
| **1** | 4.33 | 0.52 | 4.32 | 0.38 | 4.32 | 0.45 | ຫຼາຍ |
| **2** | 4.41 | 0.54 | 4.46 | 0.50 | 4.44 | 0.51 | ຫຼາຍ |
| **3** | 4.14 | 0.47 | 4.17 | 0.55 | 4.15 | 0.50 | ຫຼາຍ |
| **4** | 4.12 | 0.49 | 4.23 | 0.45 | 4.17 | 0.46 | ຫຼາຍ |
| **5** | 4.43 | 0.44 | 4.41 | 0.43 | 4.42 | 0.43 | ຫຼາຍ |
| **ສະເລ່ຍ** | 4.29 | 0.64 | 4.43 | 0.62 | 4.30 | 0.42 | ຫຼາຍ |

ຕາຕະລາງທີ 2. ຜົນການປຽບທຽບຄວາມຄິດເຫັນກ່ຽວກັບຂະບວນການຈັດການຮຽນ - ການສອນແບບເອົານັກຮຽນ ເປັນໃຈກາງ ທີ່ໂຮງຮຽນມັດທະຍົມສົມບູນ ໄຊຍະບູລີ ລະຫວ່າງ ຜູ້ບໍລິຫານ ແລະ ຄູສອນວິຊາພາສາອັງກິດ.

| **ດ້ານທີ** | **ຜູ້ບໍລິຫານ (n=12)** | | **ຄູສອນ (n=11)** | | **T-test** | **Sig.(2-tailed)** |
|---|---|---|---|---|---|---|
| | $\bar{x}$ | S.D | $\bar{x}$ | S.D | | |
| **1** | 4.33 | 0.68 | 4.32 | 0.62 | 0.068 | 0.946 |
| **2** | 4.42 | 0.68 | 4.47 | 0.62 | -0.227 | 0.822 |
| **3** | 4.15 | 0.63 | 4.17 | 0.68 | 0.511 | 0.914 |
| **4** | 4.12 | 0.61 | 4.23 | 0.63 | 0.946 | 0.574 |
| **5** | 4.43 | 0.59 | 4.41 | 0.56 | 0.976 | 0.918 |